ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ຄະນະກຳມະການປົກຄອງແຂວງ

ເລກທີ 1444/ຄປຂ.ຈສ

ແຂວງຈຳປາສັກ, ວັນທີ 23/12/2025

ແຂວງຈຳປາສັກ
ພະແນກເຕັກໂນໂລຊີ ແລະ ການສື່ສານ
ຂາເຂົ້າ ເລກທີ 02
ວັນທີ 6.1.2026

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງອິນເຕີເນັດແຂວງຈຳປາສັກ.

- ອີງຕາມ ມາດຕາທີ 10, 11 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ(ສະບັບປັບປຸງ) ສະບັບເລກທີ78/ສພຊ ລົງວັນທີ 20 ມີນາ 2025;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແຫ່ງຊາດ ສະບັບເລກທີ 559/ນຍ, ລົງວັນທີ 31 ທັນວາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ (ຄຄອຊ) ສະບັບເລກທີ 19/ນຍ, ລົງວັນທີ 30 ມັງກອນ 2023;
- ອີງຕາມ ໜັງສືສະເໜີຂອງ ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ສະບັບເລກທີ 610/ພຕສ.ຈສ, ລົງວັນທີ 5 ທັນວາ 2025.

**ປະທານ ຄະນະກຳມະການປົກຄອງແຂວງຈຳປາສັກ ຕົກລົງ:**

**ມາດຕາ 1:** ແຕ່ງຕັ້ງຄະນະກຳມະການຄຸ້ມຄອງອິນເຕີເນັດແຂວງຈຳປາສັກ ຊຶ່ງປະກອບມີບັນດາທ່ານ ດັ່ງລຸ່ມນີ້:

1. ທ່ານ ຮອງປະທານຄະນະກຳມະການປົກຄອງແຂວງ (ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ)ເປັນປະທານ
2. ທ່ານ ຫົວໜ້າຫ້ອງວ່າການແຂວງ ເປັນຮອງ
3. ທ່ານ ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ(ເປັນຜູ້ປະຈຳການ) ເປັນຮອງ
4. ທ່ານ ຮອງຫົວໜ້າກອງບັນຊາການທະຫານແຂວງ ເປັນຮອງ
5. ທ່ານ ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເປັນຮອງ
6. ທ່ານ ຮອງຫົວໜ້າຄະນະໂຄສະນາອົບຮົມແຂວງ ເປັນຮອງ
7. ທ່ານ ຮອງຫົວໜ້າອົງການໄອຍະການປະຊາຊົນແຂວງ ຄະນະ
8. ທ່ານ ຮອງເລຂາຄະນະບໍລິຫານງານຊາວໜຸ່ມແຂວງ ຄະນະ
9. ທ່ານ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ຄະນະ
10. ທ່ານ ຮອງຫົວໜ້າພະແນກການເງິນແຂວງ ຄະນະ
11. ທ່ານ ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ຄະນະ
12. ທ່ານ ຮອງຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ(ທັງເປັນຫົວໜ້າກອງເລຂາ) ຄະນະ
13. ທ່ານ ຮອງຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ ປະຈຳພາກໃຕ້ ແຂວງຈຳປາສັກ ຄະນະ
14. ທ່ານ ຮອງປະທານຄະນະກຳມະການປົກຄອງເມືອງ ແລະ ນະຄອນປາກເຊ ຄະນະ
15. ທ່ານ ຫົວໜ້າຫ້ອງວ່າການເມືອງ, ນະຄອນປາກເຊ ຄະນະ
16. ທ່ານ ຫົວໜ້າຫ້ອງການ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ຄະນະ
17. ທ່ານ ຫົວໜ້າຫ້ອງເສນາທິການ, ກອງບັນຊາການທະຫານ ແຂວງ ຄະນະ
18. ທ່ານ ຫົວໜ້າຫ້ອງການບັນດາພະແນກການ, ອົງການທຽບເທົ່າ ຄະນະ

+ ທີ່ຕັ້ງ ແລະ ພາລະບົດບາດ.

ຄະນະກຳມະການຄຸ້ມຄອງອິນເຕີເນັດ ແຂວງຈຳປາສັກ ຂຽນຫຍໍ້ວ່າ: "ຄຄອຂ.ຈສ" ແມ່ນການຈັດຕັ້ງໜຶ່ງທີ່ບໍ່ປະຈຳການ ມີພາລະບົດບາດເປັນເສນາທິການຊ່ວຍວຽກຄະນະກຳມະການປົກຄອງແຂວງ ໃນການຄົ້ນຄວ້າ, ຊີ້ນຳ ແລະ ປະສານງານກັບບັນດາພະແນກການ, ກົມກອງອ້ອມຂ້າງແຂວງ, ເມືອງ, ນະຄອນ ກ່ຽວກັບວຽກງານອິນເຕີເນັດ ແນໃສ່ ປົກປ້ອງສິດຜົນປະໂຫຍດຂອງແຂວງ, ຮັບປະກັນຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສະໜອງຂໍ້ມູນຂ່າວສານທີ່ເປັນປະໂຫຍດໃຫ້ແກ່ສັງຄົມ.

+ ສິດ ແລະ ໜ້າທີ່.

- ຄົ້ນຄວ້າຫັນເອົານະໂຍບາຍ, ຍຸດທະສາດ, ແຜນງານ ແລະ ມະຕິຕົກລົງ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແຫ່ງຊາດ ມາຈັດຕັ້ງຜັນຂະຫຍາຍ ຢູ່ແຂວງຈຳປາສັກ;
- ຄົ້ນຄວ້າ, ວາງນະໂຍບາຍ, ກົນໄກ, ລະບຽບການເຄື່ອນໄຫວ ແລະ ມາດຕະການຕ່າງໆ ກ່ຽວກັບວຽກງານອິນເຕີເນັດ ເພື່ອສະເໜີຕໍ່ປະທານຄະນະກຳມະການປົກຄອງແຂວງ, ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ພິຈາລະນາຮັບຮອງ;
- ສະເໜີຫາປະທານຄະນະກຳມະການປົກຄອງແຂວງ, ຄະນະກຳມະການຄຸ້ມຄອງອິນເຕີເນັດ ແຫ່ງຊາດ ເພື່ອປັບປຸງ, ແກ້ໄຂ, ສ້າງ ຫຼື ຍົກເລີກບັນດາກົນໄກ, ນະໂຍບາຍ, ແຜນການ, ນິຕິກຳ, ລະບຽບການເຄື່ອນໄຫວ ແລະ ມາດຕະການຕ່າງໆ ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບຄວາມເປັນຈິງຂອງແຂວງ ໃນແຕ່ລະໄລຍະ;
- ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ລະບຽບການກ່ຽວກັບວຽກງານຄຸ້ມຄອງອິນເຕີເນັດ ລວມທັງວຽກງານຕອບຕ້ານ ທາງສຽງໃນສັງຄົມ;
- ຊີ້ນຳວຽກງານຄຸ້ມຄອງ, ຕິດຕາມ, ກວດກາ, ຕອບຕ້ານ ແລະ ມາດຕະການທາງດ້ານກົດໝາຍ ຕໍ່ຜູ້ລະເມີດ;
- ຊຸກຍູ້, ສົ່ງເສີມການນຳໃຊ້ອິນເຕີເນັດ, ໃຫ້ເປັນປະໂຫຍດ ແລະ ມີຄວາມປອດໄພ;
- ສະເໜີປັບປຸງໂຄງປະກອບກົງຈັກການຈັດຕັ້ງ ແລະ ກອງເລຂາຊ່ວຍວຽກ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແຂວງຈຳປາສັກ;
- ຈັດກອງປະຊຸມສະໄໝສາມັນ ແລະ ວິສາມັນ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແຂວງຈຳປາສັກ;
- ຄົ້ນຄວ້າ, ຊອກຫາແຫຼ່ງງົບປະມານ ເພື່ອພັດທະນາວຽກງານອິນເຕີເນັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
- ແຕ່ງຕັ້ງອະນຸກຳມະການຊ່ວຍວຽກສະເພາະດ້ານ ເມື່ອເຫັນວ່າມີຄວາມຈຳເປັນ;
- ປະຕິບັດສິດ ແລະ ໜ້າທີ່ອື່ນຕາມກົດໝາຍ, ລະບຽບການ ແລະ ການຕົກລົງ ຂອງປະທານຄະນະກຳມະການປົກຄອງແຂວງ.

ມາດຕາ 2: ແຕ່ງຕັ້ງກອງເລຂາຊ່ວຍວຽກ ປະກອບດ້ວຍບັນດາທ່ານດັ່ງລຸ່ມນີ້:

| | | |
|---|---|---|
| 1. | ທ່ານ ຮອງຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ຜູ້ຊີ້ນຳວຽກ | ເປັນຫົວໜ້າ |
| 2. | ທ່ານ ຫົວໜ້າຂະແໜງຄວາມປອດໄພໄຊເບີ, (ພະແນກ ຕສ ແຂວງ) | ເປັນຮອງ |
| 3. | ທ່ານ ຫົວໜ້າຂະແໜງສັງລວມທາງສຽງສັງຄົມ (ຄະນະໂຄສະນາອົບຮົມແຂວງ) | ເປັນຮອງ |
| 4. | ທ່ານ ຫົວໜ້າຂະແໜງຄົ້ນຄວ້າ-ສັງລວມວຽກລັດ (ຫ້ອງວ່າການແຂວງ) | ຄະນະ |
| 5. | ທ່ານ ຫົວໜ້າຂະແໜງໄປສະນີ ແລະ ການສື່ສານ, (ພະແນກ ຕສ ແຂວງ) | ຄະນະ |
| 6. | ທ່ານ ຫົວໜ້າຫ້ອງການບໍລິຫານ, (ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວແຂວງ ) | ຄະນະ |
| 7. | ທ່ານ ຮອງຫົວໜ້າຫ້ອງການ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ | ຄະນະ |
| 8. | ທ່ານ ຮອງຫົວໜ້າຫ້ອງສຳມະໂນຄົວ, ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ | ຄະນະ |
| 9. | ທ່ານ ຮອງຫົວໜ້າຫ້ອງຕຳຫຼວດ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ | ຄະນະ |

9. ທ່ານ ຮອງຫົວໜ້າຫ້ອງຕຳຫຼວດ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ຄະນະ

10. ທ່ານ ຫົວໜ້າສູນ ໄອຊີທີ (ພະແນກສຶກສາທິການ ແລະ ກິລາແຂວງ) ຄະນະ

+ ສິດ ແລະ ໜ້າທີ່.

- ຊ່ວຍວຽກ ຄະນະກຳມະການຄຸ້ມຄອງອິນເຕີເນັດ ແຂວງຈຳປາສັກ,
- ປັບປຸງນິຕິກຳ, ແຜນດຳເນີນງານ, ແຜນພັດທະນາວຽກງານອິນເຕີເນັດ ຕາມການມອບໝາຍ;
- ພົວພັນປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມ, ກວດກາ, ວິເຄາະເຫດການ ເນື້ອໃນຂໍ້ມູນຂ່າວສານຜ່ານອິນເຕີເນັດ, ເພື່ອສະເໜີມາດຕະການຕອບໂຕ້, ຊີ້ແຈງ ແລະ ແກ້ໄຂໃຫ້ວ່ອງໄວທ່ວງທັນເວລາ ກ່ຽວກັບບັນຫາຂ່າວປອມ, ຂໍ້ມູນທີ່ບໍ່ມີຄວາມຈິງ, ຕົວະຍົວະ, ຫຼອກລວງ, ການໃສ່ຮ້າຍປ້າຍສີ ແລະ ອື່ນໆ
- ສະຫຼຸບສັງລວມ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ ໃຫ້ຄະນະກຳມະການຄຸ້ມຄອງອິນເຕີເນັດ ແຕ່ລະຂັ້ນ;
- ຈັດກອງປະຊຸມ, ສຳມະນາ, ຝຶກອົບຮົມ, ເຜີຍແຜ່ນິຕິກຳ, ແລະ ຜົນສຳເລັດການຈັດຕັ້ງປະຕິບັດວຽກງານ, ຄະນະກຳມະການຄຸ້ມຄອງອິນເຕີເນັດ ແຂວງຈຳປາສັກ ພ້ອມທັງສ້າງກິດຈະກຳປຸກຈິດສຳນຶກໃຫ້ສັງຄົມໃນທົ່ວແຂວງ;
- ຮ່ວມມື, ແລກປ່ຽນບົດຮຽນ ກ່ຽວກັບວຽກງານຄຸ້ມຄອງອິນເຕີເນັດ ທັງພາຍໃນ ແລະ ຕ່າງປະເທດ ຕາມການເຫັນດີຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແຂວງຈຳປາສັກ;
- ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແຂວງຈຳປາສັກ.

ມາດຕາ 4: ງົບປະມານ

1. ຄະນະກຳມະການຄຸ້ມຄອງອິນເຕີເນັດແຂວງຈຳປາສັກ ນຳໃຊ້ງົບປະມານຂອງແຂວງຂອງຄະນະກຳມະການຄຸ້ມຄອງອິນເຕີເນັດ ແຫ່ງຊາດ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວ ວຽກງານຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແຂວງຈຳປາສັກ ຖືກຕ້ອງ, ສອດຄ່ອງຕາມລະບຽບການ;

2. ມອບໃຫ້ຫ້ອງວ່າການແຂວງ ເປັນໃຈກາງປະສານສົມທົບ ກັບ ພະແນກການເງິນ ແລະ ພະແນກເຕັກໂນໂລຊີ ແລະ ການສື່ສານ ຄົ້ນຄວ້າ, ຈັດສັນງົບປະມານນຳໃຊ້ເຂົ້າໃນວຽກງານຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດຂອງແຂວງຈຳປາສັກ ໃນແຕ່ລະໄລຍະ;

ມາດຕາ 5 ການຈັດຕັ້ງປະຕິບັດ.

1. ມອບໃຫ້ບັນດາພະແນກການ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຕາມໂຄງປະກອບໃນ ມາດຕາ 01 ແຈ້ງລາຍຊື່ໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານ ເພື່ອຊາບ, ບັນຈຸເຂົ້າໃນຄະນະກຳມະການຄຸ້ມຄອງອິນເຕີເນັດຂັ້ນແຂວງ;

2. ມອບໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;

3. ສຳລັບຂັ້ນເມືອງ, ນະຄອນ ແລະ ຂະແໜງການ ທີ່ມີຄວາມຮັບຜິດຊອບໃນຂໍ້ຕົກລົງສະບັບນີ້ ໃຫ້ແຕ່ງຕັ້ງຄະນະກຳມະການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ໃນຂັ້ນຂອງຕົນ ເພື່ອຈັດຕັ້ງປະຕິບັດຕາມສິດ, ໜ້າທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

ມາດຕາ 6 ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 1538/ຈຂ.ຈສ, ລົງວັນທີ 31 ທັນວາ 2024 ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຕາງໜ້າ ຄະນະກຳມະການປົກຄອງແຂວງ

ປະທານ

ແຂວງຈຳປາສັກ

ປອ ສຸກສະຫວັນ ວິໄລວົງ